ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ
ເຈົ້າແຂວງ

ເລກທີ..1096./ຈຂ ອຊ
ອຸດົມໄຊ, ລົງວັນທີ..31...7...2018

# ຂໍ້ຕົກລົງ
# ວ່າດ້ວຍກອງທຶນແຮຊ່ວຍເຫຼືອສຸກເສີນຜູ້ປະສົບໄພພິບັດ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ່ 68/ສພຊ, ລົງວັນທີ່ 14 ທັນວາ 2015.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການສ້າງຕັ້ງກອງທຶນສົງເຄາະສະບັບເລກທີ 175/ນຍ, ລົງວັນທີ 28/9/1999.
- ອີງຕາມ ດຳລັດວ່າດ້ວຍສັງຄົມສົງເຄາະສະບັບເລກທີ 169/ລບ, ລົງວັນທີ 19 / 06 / 2013.
- ອີງຕາມ ມະຕິຂອງກອງປະຊຸມສະພາປະຊາຊົນແຂວງ ກ່ຽວກັບການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍດ້ວຍກອງທຶນແຮຊ່ວຍເຫຼືອສຸກເສີນຜູ້ປະສົບໄພພິບັດ ຢູ່ແຂວງອຸດົມໄຊ ສະບັບເລກທີ 94 / ສພຂ, ອຊ, ລົງວັນທີ 14 / 02 / 2018.
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງອຸດົມໄຊ ສະບັບເລກທີ 116/ ຄປຈ, ລົງວັນທີ 21 / 02 / 2018

ເພື່ອຄຸ້ມຄອງ ການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ຊ່ວຍເຫຼືອສຸກເສີນໃຫ້ແກ່ເປົ້າໝາຍຜູ້ທີ່ປະສົບເຄາະຮ້າຍຈາກໄພພິບັດຕ່າງໆໃຫ້ທັນເວລານັ້ນ,

## ເຈົ້າແຂວງ - ແຂວງອຸດົມໄຊ ຕົກລົງ
## ໝວດທີ 1
## ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບກອງທຶນແຮຊ່ວຍເຫຼືອສຸກເສີນຜູ້ທີ່ປະສົບເຄາະຮ້າຍຈາກໄພພິບັດ ເພື່ອລະດົມທຶນຈາກ ບຸກຄົນ, ນິຕິບຸກຄົນ, ຄອບຄົວ, ອົງການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງສາກົນຕ່າງໆທັງພາຍໃນ ແລະ ຕ່າງປະເທດ, ເພື່ອປະກອບສ່ວນເງິນເຂົ້າກອງທຶນ, ສະສົມທຶນເຮັດໃຫ້ກອງທຶນມີຄວາມເຂັ້ມແຂງ ແລະ ຄວາມຍືນຍົງ ເພື່ອຊ່ວຍເຫຼືອບັນເທົາທຸກ ດ້ານມະນຸດສະທຳແກ່ເປົ້າໝາຍຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆ.

ມາດຕາ 2 ກອງທຶນແຮຊ່ວຍເຫຼືອສຸກເສີນໃຫ້ແກ່ຜູ້ປະສົບໄພພິບັດ

ມາດຕາ 7 ວິທີການຊ່ວຍເຫຼືອ

ວິທີການຊ່ວຍເຫຼືອປະກອບມີ 2 ວິທີຄື:

1. ວິທີສຸກເສີນ ແມ່ນການຊ່ວຍເຫຼືອໂດຍທັນທີໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດທີ່ເກີດຂຶ້ນໃຫ້ທັນເວລາ;
2. ວິທີປົກກະຕິ ແມ່ນການຊ່ວຍເຫຼືອຫຼັງໄດ້ຮັບຂໍ້ມູນຜົນເສຍຫາຍ ຈາກໄພພິບັດລະອຽດຈາກພາກສ່ວນທີ່ກ່ຽວຂ້ອງ.

ມາດຕາ 8 ຮູບການຊ່ວຍເຫຼືອ

1. ຊ່ວຍເຫຼືອເປັນ ວັດຖຸ ຫຼື ເງິນສົດ ( ຕາມທີ່ໄດ້ກຳນົດໄວ້ໃນ ໂລແມັງ II ຂໍ້ 5 - 6 ຂອງຄຳແນະນຳ ສະບັບເລກທີ 874/ຮສສ, ລົງວັນທີ 23/02/2015 ) ລະອຽດມີບົດແນະນຳຈັດຕັ້ງປະຕິບັດ.

## ໝວດທີ 3
## ແຫຼ່ງລາຍຮັບ - ລາຍຈ່າຍ ແລະ ການປະກອບເອກະສານ

ມາດຕາ 9 ແຫຼ່ງລາຍຮັບ

1. ຮັບຈາກສ່ວນແບ່ງຄັງແຮ່ຂອງແຂວງ ແລະ ເງິນເກີນແຜນແຕ່ລະປີຂອງແຂວງ;
2. ຮັບຈາກການປະກອບສ່ວນພັນທະຂອງບຸກຄົນ, ນິຕິບຸກຄົນ ແລະ ວິສາຫະກິດຕ່າງໆດັ່ງນີ້:
   - 2.1 ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ 40.000 ກີບຕໍ່ຄົນ/ປີ;
   - 2.2 ພະນັກງານລັດວິສາຫະກິດ 60.000 ກີບຕໍ່ຄົນ/ປີ;
   - 2.3 ບໍລິສັດຫຸ້ນສ່ວນພາຍໃນ ແລະຕ່າງປະເທດ 200.000 ກີບຕໍ່ທະບຽນ/ປີ;
   - 2.4 ບໍລິສັດຈຳກັດ 150.000 ກີບ;
   - 2.5 ບໍລິສັດຈຳກັດຜູ້ດຽວ 120.000 ກີບຕໍ່ທະບຽນ/ປີ;
   - 2.6 ວິສາຫະກິດສ່ວນບຸກຄົນ 50.000 ກີບຕໍ່ທະບຽນ/ປີ;
   - 2.7 ປະຊາຊົນທົ່ວໄປ 6.000 ກີບຕໍ່ປີ/ຄົວເຮືອນ. ( ນອກຈາກຂໍ້ 2.1-2.5 ຂ້າງເທິງນີ້ )
3. ຮັບຈາກການປະກອບສ່ວນດ້ວຍຄວາມສະໝັກໃຈຈາກບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຈະເປັນເງິນສົດ ຫຼື ວັດຖຸ;
4. ຮັບຈາກອັດຕາດອກເບ້ຍ ເງິນຝາກຂອງກອງທຶນ;
5. ຮັບຈາກການຈັດກິດຈະກຳຫາລາຍໄດ້ ແລະ ແຫຼ່ງທຶນອື່ນໆ.

ມາດຕາ 10 ລາຍຈ່າຍຂອງກອງທຶນ

1. ຈ່າຍຊື້ວັດຖຸອຸປະກອນ, ເຄື່ອງອຸປະໂພກ-ບໍລິໂພກ, ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ຄົວເຮືອນເພື່ອຊ່ວຍເຫຼືອເປົ້າໝາຍ;
2. ຈ່າຍຊ່ວຍເຫຼືອຜູ້ເສຍຊີວິດ ຍ້ອນເຫດການໄພພິບັດຕາມຄຳແນະນຳ 874/ຮສສ, ລົງວັນທີ 23/02/2015;
3. ຈ່າຍບໍລິຫານກອງທຶນ, ລົງເກັບກຳຂໍ້ມູນ, ປະເມີນຜົນເສຍຫາຍຈາກໄພພິບັດ ແລະ ຕິດຕາມຊຸກຍູ້ການຊ່ວຍເຫຼືອແຕ່ລະໄລຍະ; ( ລາຍຈ່າຍໃຫ້ປະຕິບັດຕາມລະບຽບການທີ່ກະຊວງການເງິນວາງອອກ )

4. ສ້າງຖານຂໍ້ມູນຄຸ້ມຄອງລະບົບບັນຊີ, ການເງິນ ຂອງກອງທຶນໃຫ້ລະອຽດ;
5. ການຈັດຕັ້ງປະຕິບັດການຊ່ວຍເຫຼືອແຕ່ລະໄລຍະໃຫ້ມີປະສິດທິຜົນ, ໂປ່ງໃສ ແລະ ຍຸຕິທຳ;
6. ລະດົມຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ, ສັງຄົມ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າກອງທຶນ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການເກັບເງິນ, ປະກອບເງິນເຂົ້າກອງທຶນໃນແຕ່ລະປີໃຫ້ປົກກະຕິ;
8. ສະຫຼຸບ ລາຍງານການເຄື່ອນໄຫວວຽກງານກອງທຶນຕໍ່ຄະນະກຳມະການບໍລິຫານຄຸ້ມຄອງກອງທຶນໄພພິບັດແຕ່ລະໄລຍະ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 17 ໂຄງປະກອບຄະນະບໍລິຫານກອງທຶນຂັ້ນເມືອງ**

ຄະນະກຳມະການບໍລິຫານ ຄຸ້ມຄອງກອງທຶນຊ່ວຍເຫຼືອໄພພິບັດ ປະກອບດ້ວຍ:

| | |
|---|---|
| 1. ຮອງເຈົ້າເມືອງ ຜູ້ຊີ້ນຳຂົງເຂດວັດທະນາທຳ-ສັງຄົມ | ເປັນປະທານ |
| 2. ຫົວໜ້າ ຫຼື ຮອງ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ | ເປັນຮອງປະທານ |
| 3. ຫົວໜ້າ ຫຼື ຮອງ ຫ້ອງການການເງິນເມືອງ | ເປັນກຳມະການ |
| 4. ຫົວໜ້າ ຫຼື ຮອງ ຫ້ອງວ່າການປົກຄອງເມືອງ | ເປັນກຳມະການ |
| 5. ຫົວໜ້າ ຫຼື ຮອງ ທະນາຄານຂອງລັດ | ເປັນກຳມະການ |
| 6. ຫົວໜ້າ ຫຼື ຮອງ ຫົວຫນ້າຫ້ອງການ ຖ ວ ທ ເມືອງ | ເປັນກຳມະການ |

**ມາດຕາ 18 ສິດ ແລະ ຫນ້າທີ່**

ສິດ ແລະ ຫນ້າທີ່ຂອງ ຄະນະກຳມະການ ຄຸ້ມຄອງກອງທຶນຂັ້ນເມືອງ ມີດັ່ງນີ້:

1. ສ້າງແຜນງົບປະມານເຂົ້າໃນການຈັດຕັ້ງເຄື່ອນໄຫວວຽກງານບໍລິຫານກອງທຶນ;
2. ເພື່ອນຳສະເໜີ ທ່ານເຈົ້າເມືອງພິຈາລະນາອະນຸມັດງົບປະມານບໍລິຫານປະຈຳປີ;
3. ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ຈາກບຸກຄົນ, ນິຕິບຸກຄົນ, ສັງຄົມ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າກອງທຶນ;
4. ຊີ້ນຳ ນຳພາ, ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວ ຂອງກອງທຶນ;
5. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງກອງທຶນ;
6. ສະຫຼຸບລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງກອງທຶນຕໍ່ເຈົ້າເມືອງຢ່າງປົກກະຕິ;
7. ແຕ່ງຕັ້ງກອງເລຂາຮັບຜິດຊອບກອງທຶນຂັ້ນເມືອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້;
8. ປະຕິບັດສິດ ແລະ ຫນ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດຫມາຍ ແລະ ລະບຽບການ.

ມາດຕາ 19 ກອງເລຂາຂັ້ນເມືອງ

ກອງເລຂາ ເຄື່ອນໄຫວວຽກງານກອງທຶນພາຍໃຕ້ການຊີ້ນຳຂອງ ຄະນະກຳມະການບໍລິຫານ ຄຸ້ມຄອງ ກອງທຶນຊ່ວຍເຫຼືອໄພພິບັດປະກອບມີດັ່ງນີ້:

| | |
|---|---|
| 1. ຮອງ ຫົວໜ້າຫ້ອງການ ຮສສ ເມືອງ | ເປັນຫົວຫນ້າ |
| 2. ຫົວໜ້າ ຫຼື ຮອງ ໜ່ວຍງານບໍລິຫານຫ້ອງການການເງິນເມືອງ | ເປັນຮອງ |
| 3. ຫົວໜ້າ ຫຼື ຮອງ ໜ່ວຍງານບໍລິການບັນຊີທະນາຄານລັດ ເມືອງ | ເປັນຄະນະ |
| 4. ຫົວໜ້າ ຫຼື ຮອງ ໜ່ວຍງານສັງລວມວຽກລັດຫ້ອງວ່າການປົກຄອງເມືອງ | ເປັນຄະນະ |

5. ຫົວໜ້າ ຫຼື ຮອງໜ່ວຍງານຖະແຫຼງຂ່າວ-ສື່ມວນຊົນ ຫ້ອງການຖວທເມືອງ ເປັນຄະນະ
6. ຫົວໜ້າ ຫຼື ຮອງ ໜ່ວຍງານສັງຄົມສົງເຄາະ ຫ້ອງການ ຮສສ ເມືອງ ເປັນຄະນະ
7. ນາຍບ້ານ ຫຼື ຮອງນາຍບ້ານ ເປັນຄະນະ

ມາດຕາ 20 ສິດ ແລະ ໜ້າທີ່

ສິດ ແລະ ໜ້າທີ່ ຂອງກອງເລຂາ ກອງທຶນຊ່ວຍເຫຼືອໄພພິບັດ ປະກອບມີດັ່ງນີ້:

1. ເກັບກຳຂໍ້ມູນຜົນເສຍຫາຍຈາກໄພພິບັດຕ່າງໆ ເພື່ອສະເໜີ ຕໍ່ຄະນະກຳມະການບໍລິຫານ ຄຸ້ມຄອງກອງທຶນພິຈາລະນາ ອະນຸມັດງົບປະມານເພື່ອຊ່ວຍເຫຼືອສຸກເສີນ ແລະ ຊ່ວຍເຫຼືອປົກກະຕິ;
2. ຈັດຕັ້ງເຜີຍແຜ່ຂະຫຍາຍ, ຂໍ້ຕົກລົງ ແລະ ບົດແນະນຳ ທີ່ກ່ຽວຂ້ອງກັບວຽກງານກອງທຶນໃຫ້ພະນັກງານ - ລັດຖະກອນ, ທະຫານ,ຕຳຫຼວດ ແລະ ປະຊາຊົນໄດ້ຮັບຮູ້ຢ່າງທົ່ວເຖິງ;
3. ສ້າງແຜນການ ສະເໜີແຜນງົບປະມານຮັບໃຊ້ການເຄື່ອນໄຫວວຽກງານກອງທຶນ ປະຈຳປີ ຕໍ່ຄະນະກຳມະການບໍລິຫານຄຸ້ມຄອງກອງທຶນ;
4. ການຈັດຕັ້ງປະຕິບັດການຊ່ວຍເຫຼືອແຕ່ລະໄລຍະໃຫ້ມີຄວາມໂປ່ງໃສ ແລະ ມີປະສິດທິຜົນ;
5. ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ຈາກບຸກຄົນ, ນິຕິບຸກຄົນ, ສັງຄົມ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າກອງທຶນ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການເກັບເງິນປະກອບເງິນເຂົ້າກອງທຶນໃນແຕ່ລະປີ;
7. ສະຫຼຸບ ລາຍງານການເຄື່ອນໄຫວວຽກງານກອງທຶນ ຕໍ່ຄະນະກຳມະການບໍລິຫານ ຄຸ້ມຄອງກອງທຶນໄພພິບັດ ຢ່າງປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 21 ກອງປະຊຸມ

ກອງປະຊຸມຂອງຄະນະກຳມະການບໍລິຫານຄຸ້ມຄອງກອງທຶນຊ່ວຍເຫຼືອໄພພິບັດປະກອບມີກອງປະຊຸມສາມັນ ແລະ ວິສາມັນ;

ກອງປະຊຸມສາມັນຂອງຄະນະກຳມະການບໍລິຫານຄຸ້ມຄອງກອງທຶນຈັດຂຶ້ນປີລະຄັ້ງ ເພື່ອຜ່ານບົດສະຫຼຸບການຈັດຕັ້ງປະຕິບັດການຊ່ວຍເຫຼືອສຸກເສີນແລະຊ່ວຍເຫຼືອປົກກະຕິໃຫ້ແກ່ຜູ້ທີ່ປະສົບເຄາະຮ້າຍຈາກໄພພິບັດລາຍຮັບ, ລາຍຈ່າຍຂອງກອງທຶນ ໃນໄລຍະ 1 ປີຜ່ານມາ ແລະ ທິດທາງແຜນການປີຕໍ່ໜ້າ;

ໃນກໍລະນີຮີບດ່ວນສາມາດຈັດຕັ້ງກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາຕາມການຮຽກປະຊຸມຂອງປະທານຄະນະກຳມະການບໍລິຫານຄຸ້ມຄອງກອງທຶນຊ່ວຍເຫຼືອໄພພິບັດກອງປະຊຸມຈະເປີດຂຶ້ນໄດ້ກໍ່ຕໍ່ເມື່ອມີຜູ້ເຂົ້າຮ່ວມສອງສ່ວນສາມຂອງຈຳນວນສະມາຊິກທັງໝົດມະຕິກອງປະຊຸມຈະມີຄຸນຄ່າໄດ້ກໍ່ຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫຼາຍຂອງສະມາ ຊິກທີ່ເຂົ້າຮ່ວມກອງປະຊຸມທັງໝົດ.

## ໝວດທີ 5
## ການເປີດບັນຊີ, ການກວດສອບ ແລະ ລະບອບການລາຍງານ

ມາດຕາ 22 ການເປີດບັນຊີ ຂອງກອງທຶນ

1. ເກັບກຳຂໍ້ມູນໄພພິບັດຕ່າງໆ ພ້ອມທັງສະເໜີໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຊ່ວຍເຫຼືອໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດໃຫ້ທັນເວລາ;
2. ປະສານສົມທົບກັບຫ້ອງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆ;
3. ປຸກລະດົມທຶນຮອນຈາກພາກສ່ວນຕ່າງໆທັງພາຍໃນ ແລະ ຕ່າງປະເທດເພື່ອປະກອບເຂົ້າກອງທຶນ;
4. ສັງລວມບັນດາຄຳຮ້ອງທຸກຈາກບຸກຄົນ, ຄອບຄົວທີ່ປະສົບເຄາະຮ້າຍຈາກໄພພິບັດຕ່າງໆສົ່ງໃຫ້ແຂວງພິຈາລະນາງົບປະມານເພື່ອຊ່ວຍເຫຼືອເຂົາເຈົ້າໃຫ້ທັນເວລາ;
5. ຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານກອງທຶນໃຫ້ຄະນະກຳມະການຂັ້ນເມືອງຮັບຊາບປົກກະຕິ.

**ມາດຕາ 28 ອົງການກວດກາພາຍໃນ**

1. ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ

1.1 ຂະແໜງກວດກາພະແນກ ຮສສ ແຂວງ;

1.2 ຫ້ອງການບໍລິຫານ;

**ມາດຕາ 29 ອົງການກວດກາພາຍນອກ**

1. ສະພາປະຊາຊົນແຂວງ;
2. ຄະນະກວດກາພັກ-ລັດແຂວງ;
3. ອົງການກວດສອບແຫ່ງລັດ ປະຈຳພາກເໜືອ;
4. ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ມວນຊົນ.

**ມາດຕາ 30 ເນື້ອໃນການກວດກາ**

ເນື້ອໃນການກວດກາກອງທຶນໄພພິບັດ ມີດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນດຳເນີນງານ, ຂໍ້ຕົກລົງວ່າດ້ວຍກອງທຶນ ແລະ ບົດແນະນຳການຈັດຕັ້ງປະຕິບັດກອງທຶນໄພພິບັດ;
2. ການຈັດຕັ້ງປະຕິບັດແຜນການ, ແຜນງານ, ກ່ຽວກັບກອງທຶນ;
3. ການຈັດຕັ້ງປະຕິບັດວຽກງານຂອງພະນັກງານກອງເລຂາກອງທຶນ ແລະ ການປະຕິບັດນະໂຍບາຍຕ່າງໆ;
4. ແຫຼ່ງລາຍຮັບ - ລາຍຈ່າຍຂອງກອງທຶນ ແລະ ການຈັດຕັ້ງປະຕິບັດ ງົບປະມານບໍລິຫານກອງທຶນນອກຈາກນີ້ ປະຕິບັດຕາມເນື້ອໃນກວດກາ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 31 ຮູບແບບການກວດກາ**

ກວດກາກອງທຶນໄພພິບັດ ມີ ສາມ ຮູບການ ດັ່ງນີ້:

1. ກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

**ມາດຕາ 36 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ປັບໃໝ ຫຼື ດຳເນີນຄະດີຕາມກົດໝາຍຕາມແຕ່ກໍລະນີໜັກ ຫຼື ເບົາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ຄະນະກຳມະການ ແລະ ກອງເລຂາ ມີໜ້າທີ່ສ້າງບົດແນະນຳໃນການຈັດຕັ້ງປະຕິບັດຕົວຈິງ, ຈັດຕັ້ງ ຜັນຂະຫຍາຍ,ໂຄສະນາ, ເຜີຍແຜ່ໃຫ້ກ້ວາງຂວາງ, ທົ່ວເຖິງ ແລະ ຈັດຕັ້ງປະຕິບັດຖືກຕ້ອງຕາມລະບຽບກົດໝາຍ.

ພະແນກການເງິນ ແລະ ຫ້ອງວ່າການປົກຄອງແຂວງ ມີໜ້າທີ່ຈັດສັນງົບປະມານເຂົ້າກອງທຶນຊ່ວຍເຫຼືອໄພພິບັດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

ຄະນະກຳມະການບໍລິຫານ ຄຸ້ມຄອງ ແລະ ກອງເລຂາກອງທຶນ ປະສານສົມທົບກັບ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ປະກົດຜົນເປັນຈິງ ແລະ ມີປະສິດທິຜົນ ພ້ອມທັງລາຍງານສະພາບການເຄື່ອນໄຫວຮອບດ້ານຂອງກອງທຶນໄພພິບັດ ເປັນລາຍລັກອັກສອນຕໍ່ທ່ານເຈົ້າແຂວງຢ່າງປົກກະຕິ;

ບັນດາພະແນກການ ອົງການລັດທຽບເທົ່າ, ພາກສ່ວນທີ່ກ່ຽວຂ້ອງ ແລະ ປະຊາຊົນ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 38 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງສິບຫ້າວັນນັບແຕ່ວັນພິມລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ເຈົ້າແຂວງ - ແຂວງອຸດົມໄຊ

ຄຳພຽງ ຢາຈົງວາ